ບໍລິສັດ AGL ປະກັນໄພລາວ
Assurances General Laos

# ເງື່ອນໄຂການປະກັນໄພ

**ຜູ້ໄດ້ຮັບການປະກັນໄພຕ້ອງມີເງື່ອນໄຂດັ່ງນີ້:**

ຄົນລາວ ຫຼື ຄົນຕ່າງປະເທດທີ່ພັກອາໃສຢູ່ ສປປ ລາວ., ມີອາຍຸ 18-75 ປີ, ເປັນຜູ້ທີ່ມີສຸຂະພາບແຂງ ແຮງດີ, ບໍ່ເປັນຄົນພິການຫຼືໄດ້ຮັບບາດເຈັບ ແລະ ບໍ່ມີພະຍາດຊຶມເຊື້ອ ຫຼື ພະຍາດປະຈໍາຕົວ ມາກ່ອນ

**ນິຍາມຄໍາສັບ**:

- **ຜູ້ໄດ້ຮັບການປະກັນໄພ:** ໝາຍເຖິງ ບຸກຄົນທີ່ລະບຸຊື່ເປັນຜູ້ໄດ້ຮັບການປະກັນໄພໃນຕາຕະລາງ ສັນຍາປະກັນໄພນີ້ ເຊິ່ງເປັນບຸກຄົນທີ່ໄດ້ຄຸ້ມກັນຕາມສັນຍາປະກັນໄພນີ້
- **ການຈ່າຍຄ່າທົດແທນ:** ສໍາລັບການເສຍຊີວິດ ບໍລິສັດຈະຈ່າຍໃຫ້ແກ່ຜູ້ຮັບປະໂຫຍດ ຕາມທີ່ກໍານົດໄວ້ໃນສັນຍາ ຈະຈ່າຍໃຫ້ສາມີ ຫລື ພັນລະຍາ ຫລື ຜູ້ສືບທອດມໍລະດົກຂອງເຈົ້າຂອງ ຫລື ຜູ້ໄດ້ຮັບສິດສືບທອດ ຊຶ່ງການຈ່າຍບໍຈໍາເປັນໃຫ້ບໍລິສັດເປັນຜູ້ແບ່ງປັນ, ສ່ວນຄ່າທົດແທນອື່ນໆ ຈະຈ່າຍໃຫ້ແກ່ຜູ້ໄດ້ຮັບການປະກັນໄພ.
- **ພິການຖາວອນທັງໝົດ:** ໝາຍເຖິງ ການພິການທີ່ບໍ່ສາມາດປະກອບອາຊີບໄດ້ຕາມປົກກະຕິ ຫຼື ບໍ່ສາມາດປະກອບອາຊີບອື່ນໆໄດ້ຢ່າງສິ້ນເຊີງຕະຫຼອດໄປ
- **ການສູນເສຍອະໄວຍະວະຖາວອນ:** ໝາຍເຖິງ ການຕັດອະໄວຍະວະອອກຈາກຮ່າງກາຍ ຕັ້ງແຕ່ ຂໍ້ມື ຫຼື ຂໍ້ຕີນ ລວມເຖິງການເສື່ອມສະມັດຖະພາບຂອງການນໍາໃຊ້ອະໄວຍະວະດັ່ງກ່າວ ໂດຍມີຂໍ້ບົ່ງຊີ້ທາງການແພດທີ່ຊັດເຈນວ່າບໍ່ສາມາດກັບມານໍາໃຊ້ໄດ້ອີກຕະຫຼອດໄປ
- **ການສູນເສຍສາຍຕາ:** ໝາຍເຖິງ ຕາບອດຖາວອນແລະບໍ່ສາມາດປິ່ນປົວໄດ້ຕະຫຼອດໄປ

**ການຄຸ້ມກັນ**: ສັນຍາປະກັນໄພສະບັບນີ້ຄຸ້ມກັນຄວາມສູນເສຍ ຫຼື ຄວາມເສຍຫາຍອັນເກີດຈາກການບາດເຈັບທາງຮ່າງກາຍຂອງຜູ້ເອົາປະກັນໄພໂດຍອຸປະຕິເຫດ ແລະ ເຮັດໃຫ້ຜູ້ເອົາປະກັນໄພເສຍຊີວິດ, ສູນເສຍອະໄວຍະວະ, ສູນເສຍສາຍຕາ ຫຼືພິການຖາວອນທັງໝົດ ພາຍໃນ 180 ວັນ ນັບແຕ່ວັນທີ່ເກີດ ອຸປະຕິເຫດ ຫຼື ເຮັດໃຫ້ຜູ້ໄດ້ຮັບການປະກັນໄພບາດເຈັບຕ້ອງໄດ້ເຂົ້ານອນປິ່ນປົວໄລຍະຕິດຕໍ່ກັນໃນໂຮງ ໝໍ ຫຼືສະຖານພະຍາບານ ແລະ ເສຍຊີວິດເພາະການບາດເຈັບນັ້ນໃນໄລຍະຕໍ່ມາ; ໂດຍຜູ້ໄດ້ຮັບການປະ ກັນໄພຈະໄດ້ຮັບສິນທົດແທນຕາມການຄຸ້ມກັນທີ່ໄດ້ລະບຸໄວ້ໃນສັນຍາປະກັນໄພ ດັ່ງລຸ່ມນີ້:

- ສິນທົດແທນສໍາລັບການເສຍຊີວິດ 100% ຂອງວົງເງິນຄຸ້ມກັນ
- ພິການຖາວອນທັງໝົດ 100% ຂອງວົງເງິນຄຸ້ມກັນ
- ການສູນເສຍມື ຫຼື ຕີນ ຫຼື ສາຍຕາ ທັງສອງຂ້າງ 100% ຂອງວົງເງິນຄຸ້ມກັນ
- ການສູນເສຍມືໜຶ່ງຂ້າງ ແລະ ຕີນໜຶ່ງຂ້າງ 100% ຂອງວົງເງິນຄຸ້ມກັນ
- ການສູນເສຍມືໜຶ່ງຂ້າງ ແລະ ສາຍຕາໜຶ່ງຂ້າງ 100% ຂອງວົງເງິນຄຸ້ມກັນ
- ການສູນເສຍຕີນໜຶ່ງຂ້າງ ແລະ ສາຍຕາໜຶ່ງຂ້າງ 100% ຂອງວົງເງິນຄຸ້ມກັນ
- ການສູນເສຍມືໜຶ່ງຂ້າງ ຫຼື ຕີນໜຶ່ງຂ້າງ ຫຼື ສາຍຕາໜຶ່ງຂ້າງ 60% ຂອງວົງເງິນຄຸ້ມກັນ

**ຂໍ້ຍົກເວັ້ນ: ປະກັນໄພນີ້ບໍ່ຄຸ້ມກັນ:**

1. **ການສູນເສຍ ຫຼື ຄວາມເສຍຫາຍຕ່າງໆ ອັນເກີດຈາກ ຫຼື ສືບເນື່ອງຈາກເຫດການຕໍ່ໄປນີ້:** ການປະ ພຶດຂອງຜູ້ໄດ້ຮັບການປະກັນໄພຂະນະຢູ່ພາຍໃຕ້ການມຶນເມົາ, ສິ່ງເສບຕິດ ຫຼື ຢາເສດຕິດໃຫ້ໂທດຈົນບໍ່ສາມາດຮັກສາສະຕິໄດ້ ຄໍາວ່າ "ຂະນະຢູ່ພາຍໃຕ້ຄວາມມຶນເມົາ" ນັ້ນໃນກໍລະ ນີມີການກວດເລືອດຖ້າມີລະດັບເຫລົ້າຕັ້ງແຕ່ 120mg% ຂຶ້ນໄປ. ການຂ້າຕົວຕາຍ ຫຼື ພະຍາຍາມຂ້າຕົວຕາຍ ຫຼື ການທໍາຮ້າຍຮ່າງກາຍຕົວເອງ. ການຕິດເຊື້ອໂຣກ, ເວັ້ນແຕ່ການຕິດເຊື້ອໂຣກບາດແຜເກົ່າ ຫຼື ພະຍາດເຕຕານົດ ຫຼື ພະຍາດວໍ້ ຊຶ່ງເກີດຈາກບາດແຜທີ່ໄດ້ຮັບຈາກອຸປະຕິເຫດ, ອາຫານເປັນພິດ. ການຮັກສາທາງເວດສະ ກໍາ ຫຼື ສັນຍະກໍາ ຍົກເວັ້ນຄວາມຈໍາເປັນຕ້ອງກະທໍາເນື່ອງຈາກໄດ້ຮັບບາດເຈັບ ຊຶ່ງໄດ້ຮັບການຄຸ້ມກັນພາຍໃຕ້ສັນຍາປະກັນໄພນີ້ ແລະ ໄດ້ກະທໍາພາຍໃນໄລຍະທີ່ກໍາໜົດໄວ້ໃນສັນຍາປະກັນໄພ. ການລຸລູກ/ ການເອົາລູກອອກ, ການປົວແຂ້ວ ຫຼື ການປົວຮາກແຂ້ວ, ການໃສ່ແຂ້ວທຽມເວັ້ນແຕ່ການປິ່ນປົວທີ່ໄດ້ເກີດຂຶ້ນຈາກອຸປະຕິເຫດ. ການປວດຫຼັງອັນມີສາເຫດຈາກໝອນຮອງກະດູກສັນຫຼັງເຄື່ອນທັບເສັ້ນປະສາດ ແລະ ມີຮອຍແຕກເວັ້ນແຕ່ມີການແຕກຫັກ ຫຼື ເຄື່ອນຂອງກະດູກສັນຫຼັງອັນເນື່ອງຈາກອຸປະຕິເຫດ. ສົງ ຄາມ (ບໍ່ວ່າຈະໄດ້ມີການປະກາດສົງຄາມ ຫຼືບໍ່ກໍ່ຕາມ), ການຮຸກຮານ, ການທໍາລາຍຂອງສັດຕູຕ່າງຊາດ, ສົງຄາມກາງເມືອງ, ການປະຕິວັດ, ການຈະລາຈົນ, ການກໍ່ຄວາມວຸ້ນ ວາຍເຖິງຂັ້ນລຸກຮື້ຂຶ້ນຕໍ່ຕ້ານລັດ ຖະບານ, ການກະບົດ, ການນັດຫຍຸດງານ. ການແຜ່ລັງສີ ຫຼື ການແຜ່ກໍາມັນຕະພາບລັງສີຈາກນິວເຄຣຍ ຫຼືຈາກກາກນິວເຄຣຍອື່ນໆອັນເນື່ອງຈາກການເຜົາໄໝ້ຂອງທາດນິວເຄຣຍ ແລະ ຈາກການແຕກຕົວທາງນິວເຄຣຍຊຶ່ງດໍາເນີນຕິດຕໍ່ໄປດ້ວຍຕົວເອງ. ການລະເບີດຂອງກໍາມັນຕະພາບລັງສີ ຫຼື ສ່ວນປະກອບຂອງນິວເຄຣຍ ຫຼື ວັດຖຸອັນຕະລາຍໃດໜຶ່ງທີ່ອາດຈະເກີດການລະເບີດໃນຂະບວນການນິວເຄຣຍໄດ້.

2. **ການສູນເສຍ ຫຼື ຄວາມເສຍຫາຍອື່ນໆທີ່ເກີດຂຶ້ນໃນເວລາຕໍ່ໄປນີ້**: ຂະນະທີ່ຜູ້ໄດ້ ຮັບການປະກັນໄພໄປລ່າສັດ, ແຂ່ງລົດ ຫຼື ແຂ່ງເຮືອທຸກຊະນິດ, ແຂ່ງມ້າ, ແຂ່ງສະກີທຸກຊະນິດ, ແຂ່ງສະເກັດ, ຕີມວຍ, ໂດດຈ້ອງ (ເວັ້ນແຕ່ການໂດດຈ້ອງເພື່ອຮັກສາຊີວິດ), ຂະນະຂຶ້ນ ຫຼື ລົງ ຫຼື ໂດຍ ສານຢູ່ໃນບອນລູນ ຫຼື ເຄື່ອງຊ່ວຍບິນ, ການໂດດບັນຈີ້ຈໍ້າ, ການມຸດນໍ້າທີ່ຕ້ອງໃຊ້ຖັງອາກາດ ແລະ ເຄື່ອງຊ່ວຍຫາຍໃຈໃຕ້ນໍ້າ. ຂະນະທີ່ຜູ້ເອົາປະກັນໄພກໍາລັງຂຶ້ນ ຫຼືລົງ ຫຼືໂດຍສານຢູ່ໃນອາກາດສະຍານທີ່ບໍ່ໄດ້ຈົດທະບຽນເພື່ອບັນທຸກຜູ້ໂດຍສານ ແລະ ບໍ່ໄດ້ດໍາເນີນການໂດຍສາຍການບິນຂອງລັດ. ຂະນະທີ່ ຜູ້ໄດ້ຮັບການປະກັນ ໄພຂັບຂີ່ ຫຼື ປະຕິບັດໜ້າທີ່ເປັນພະນັກງານປະຈໍາເຮືອບິນອາກາດອື່ນໆ. ຂະນະທີ່ຜູ້ໄດ້ຮັບການປະກັນ ໄພເຂົ້າຮ່ວມການອາລະວາດຕົບຕີ ຫຼື ມີສ່ວນຊຸກຍູ້ໃຫ້ເກີດການອາລະວາດ. ຂະນະທີ່ຜູ້ໄດ້ຮັບການປະ ກັນໄພ ກໍ່ອາດສະຍາກໍາທີ່ມີຄວາມຜິດສະ ຖານໜັກ ຫຼື ຂະນະຖືກຈັບກຸມ ຫຼື ລົບໜີການຈັບກຸມ. ຂະນະ ທີ່ຜູ້ໄດ້ຮັບການປະກັນໄພ ປະຕິບັດໜ້າທີ່ເປັນທະຫານ, ຕໍາຫຼວດ ຫຼື ອາສາສະໝັກ ແລະ ເຂົ້າປະຕິບັດການໃນສົງຄາມ ຫຼື ປາບປາມ.

# Policy Wording

**Insured condition:**

Lao or foreigner lives/stays in Lao PDR, age 18 to 75 years old with good medical record. The applicant/insured must not have any injury or disability and chronic illness or congenital disease prior to application

**Definitions:**

- **Insured**: refers to the person named as Insured in the Schedule**.**
- **Indemnity:** Compensation for death will be paid to the beneficiary designated or to his/her inheritors or to his/her entitled spouse, without the payment being divisible with regard to the company. Other types of compensation will be paid to the Insured
- **Total Permanent Disability:** refers to disability to the extent of being unable to perform the normal duty in the Insured's regular occupation or any other occupation totally and permanently.
- **Permanent dismemberment:** refers to the loss of body organ from the wrist joint, the ankle joint, and also the loss of use of that organ, which according to the medical indication, will never be able to function at any time in the future.
- **Loss of sight:** refers to complete blindness, which is permanently incurable

**Coverage:** This insurance covers any losses or injuries to the Insured arising from bodily injury, which is caused by an accident, resulting to loss of life, dismemberment, loss of sight or permanent disability within 180 days from the date of the accident or the injury causes the Insured to receive continuous medical treatment as an in-patient in hospital and loss of life occurs later because of such injury, the insured will received the compensates in accordance with the sum insured stated in the Schedule as follows:

- 100% of the sum insured for loss of life
- 100% of the sum insured for permanent disability
- 100% of the sum insured for loss of both hands or both feet or loss of sight for both eyes
- 100% of the sum insured for loss of one hand & one foot
- 100% of the sum insured for loss of one hand & loss of sight in one eye
- 100% of the sum insured for loss of one foot & loss of sight for in one eye
- 60% of the sum insured for loss of one hand or loss of one foot or loss of sight for in one eye

**Exclusions: This insurance does not cover:**

1. **Any loss or Injury arising from/ or in consequence of the following causes:** Action of the Insured while under the influence of alcohol, addictive drugs, narcotic drugs to the extent of being unable to control one's mind. The term "under the influence of alcohol" in case of having a blood test refers to a blood/alcohol level of 120mg percent and over. Suicide or attempted suicide or self-inflicted injury. Infections except pyogenic infections, tetanus, or rabies from a wound or cut suffered as a result of an accident. Food poisoning. Medical treatment or surgical treatment except the necessary treatment for the injury which is covered under this Insurance Policy and occurring within the period of this Insurance Policy. Miscarriage and abortion. Dental care, root canal treatment, replacement of or new sets of dentures except necessary first aid treatment following an accident. Backache as a result of Herniated Disc, Prolapsed Disc, Subluxation or Spondylolisthesis, Degeneratation or Spondylosis except if there is a fracture or dislocation of spinal cord as a result of an accident. War (whether declared or not), invasion, act of foreign enemies, civil war, revolution, insurrection, civil commotion, popular rising against the government, riot, strike. Nuclear weapons, radiation or radioactivity from any nuclear fuel or nuclear refuse arising from the combustion of nuclear fuel and any process of self-sustaining nuclear fission/ fusion.
2. **Loss or Injury which occurs:** While the Insured is hunting for animals, racing of all kinds of car or boat, horse racing, ski playing or racing, skate racing, boxing, parachute jumping (except for the purpose of life saving), boarding or traveling in a hot-air balloon, gliding, bungee jumping, mountain climbing with equipments, or diving with oxygen tank and breathing equipment under water. While the Insured is boarding or traveling in an aircraft which has no license for carrying passengers or does not operate as a commercial aircraft. While the Insured pilots or works as a crew in any aircraft. While the Insured is taking part in a brawl or taking part in inciting a brawl. While the Insured is committing a felony or while the Insured is being arrested, under arrest, or escaping the arrest. While the Insured serves as a soldier, police, or a volunteer and participates in war or crime suppression.